ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທະນາຄານແຫ່ງ ສປປ ລາວ ຕ້ອນຮັບ ຄະນະຈາກອົງການຄົ້ນຄວ້າ ເສດຖະກິດມະຫາພາກອາຊຽນ+3 (AMRO)



ໃນວັນທີ 30 ກໍລະກົດ 2025, ທີ່ ຫ້ອງຮັບແຂກຂອງ ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ສຸລິສັກ ທໍາມຸວົງ, ຮອງຜູ້ວ່າການ, ທຫລ ພ້ອມດ້ວຍຄະນະຈາກກົມກ່ຽວຂ້ອງ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ Yasuto Watanabe, ຫົວໜ້າອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 (ASEAN+3 Macroeconomic Research Office AMRO) ພ້ອມດ້ວຍຄະນະ ເນື່ອງໃນໂອກາດເດີນທາງມາເຮັດວຽກ ແລະ ຕິດຕາມສະພາບເສດຖະກິດມະຫາພາກຂອງ ສປປ ລາວ ປະຈໍາປີ 2025 ໃນໄລຍະວັນທີ 16-30 ກໍລະກົດ 2025.

ຈຸດປະສົງໃນການເຂົ້າຢ້ຽມຂໍ່ານັບຄັ້ງນີ້ ແມ່ນເພື່ອລາຍງານໃຫ້ຄະນະນໍາຂອງ ທຫລ ຊາບກ່ຽວກັບສະພາບລວມເສດຖະກິດມະຫາພາກຂອງ ສປປ ລາວ, ການເຄື່ອນໄຫວ ແລະ ບັນດາໜ້າວຽກຕ່າງໆ ທີ່ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 ໄດ້ເຄື່ອນໄຫວທີ່ຜ່ານມາໃນນາມເປັນກອງເລຂາ ແລະ ຜູ້ກວດກາຕິດຕາມເສດຖະກິດມະຫາພາກຂອງປະເທດສະມາຊິກອາຊຽນ+3 ແລະ ແຜນການຈັດຕັ້ງປະຕິບັດງານໃນຕໍ່ໜ້າ.

ໃນໂອກາດນີ້, ທ່ານ ຮອງຜູ້ວ່າການ, ທຫລ ໄດ້ສະແດງຄວາມຕ້ອນຮັບເປັນຢ່າງດີຕໍ່ການເຮັດວຽກຂອງຄະນະຊ່ຽວຊານດັ່ງກ່າວ. ພ້ອມດຽວກັນນັ້ນ, ກໍ່ໄດ້ສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍຕໍ່ການໃຫ້ຄວາມຊ່ວຍ

ເຫຼືອທາງດ້ານວິຊາການ ໂດຍສະເພາະການຮັບພະນັກງານ ທຫລ ໄປຝຶກງານທີ່ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 ທັງນີ້ກໍ່ເພື່ອສ້າງຄວາມອາດສາມາດໃຫ້ພະນັກງານ ທຫລ ໄດ້ແລກປ່ຽນ ແລະ ຖອດຖອນບົດຮຽນກັບຄະນະຊ່ຽວຊານ ພາຍໃຕ້ໂຄງການ Secondment Program ທີ່ຜ່ານມາ ລວມທັງການຕິດຕາມສະພາບເສດຖະກິດຢ່າງໃກ້ຊິດເພື່ອກຳນົດນະໂຍບາຍໃນການຮັບມືກັບສະພາບເສດຖະກິດທີ່ບໍ່ແນ່ນອນໃນພາກພື້ນ ແລະ ສາກົນ. ຫວັງຢ່າງຍິ່ງວ່າ ອົງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 ຈະສືບຕໍ່ໃນດ້ານການຊ່ວຍເຫຼືອເປັນຢ່າງດີໃຫ້ແກ່ ທຫລ ກໍ່ຄື ສປປ ລາວ ໃນອະນາຄົດຕໍ່ໜ້າ.





ຂ່າວ: ກົມຮ່ວມມືສາກົນ

ພາບ: ສົມພິດ ທຳມະວົງ

ຢູ່ເມືອງລາວໃຊ້ເງິນກີບລາວ